ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR

ຂ່າວ NEWS

ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ຄະນະກິລາຊາວໜຸ່ມ ທຫລ
# ຊະນະຊາວໜຸ່ມກະຊວງຊັບພະຍາກອນທຳມະຊາດ 4 ຕໍ່ 3.



ໃນວັນທີ 10 ທັນວາ 2020 ທີ່ສະໜາມກິລາລ້ານຊ້າງ (ໜອງໄຮ) ນະຄອນຫຼວງວຽງຈັນ ໄດ້ມີການແຂ່ງຂັນກິລາບານເຕະເພື່ອ "ຊີງຂັນທ່ານຜູ້ປະຈຳການຄະນະເລຂາທິການສູນກາງພັກ, ຮອງປະທານປະເທດ ປະຈຳປີ 2020" ລະຫວ່າງ ຄະນະນັກກິລາບານເຕະຂອງ ຄະນະຊາວໜຸ່ມທະນາຄານແຫ່ງ ສປປ ລາວ (ທຫລ) ແລະ ຄະນະນັກກິລາບານເຕະຂອງ ຄະນະຊາວໜຸ່ມກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມໂດຍການເຂົ້າຮ່ວມຂອງຄະນະນຳ, ອົງການຈັດຕັ້ງມະຫາຊົນໂດຍສະເພາະສະມາຊິກຊາວໜຸ່ມອ້ອມຂ້າງຄະນະບໍລິຫານງານຂອງ 2 ພາກສ່ວນ.

ການແຂ່ງຂັນກັນໃນນັດນີ້ຄະນະກິລາຊາວໜຸ່ມກະຊວງຊັບສາມາດຍິງເຂົ້າໄປກ່ອນ 1 ຕໍ່ 0 ແລະ ຈາກນັ້ນ, ຄະນະນັກກິລາ ທຫລ ຈຶ່ງສາມາດທັບໄຂ່ແຕກໃນເຄິ່ງເວລາຂອງຕັ້ງທີ 2 (ຕີສະເໝີ 1-1 ປະຕູ); ແຕ່ທັງສອງຝ່າຍກໍ່ຍັງບໍ່ສາມາດຍິງປະຕູກັນໄດ້; ຄະນະກຳມະການຈຶ່ງໄດ້ມີຕັດສິນໃຫ້ທັງຄູ່ຍິງລູກໂທດເຊິ່ງຄະນະກິລາບານເຕະຊາວໜຸ່ມ ທຫລ ສາມາດຍິງລູກໂທດ ຊະນະ ຄະນະຊາວໜຸ່ມກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ 4-3 ປະຕູ ແລະ ສິ່ງຜົນໃຫ້ຄະນະກິລາບານເຕະຊາວໜຸ່ມ ທຫລ ຜ່ານເຂົ້າສູ່ຮອບ 4 ທີມສຸດທ້າຍຢ່າງສົມສັກສີ.



ການແຂ່ງຂັນກິລາບານເຕະ ຊິງຂັນດັ່ງກ່າວແມ່ນໄດ້ເລີ່ມມາແຕ່ວັນທີ 12 ພະຈິກ 2020 ມາຮອດປະຈຸບັນຄະນະກິລາຊາວໜຸ່ມທະນາຄານແຫ່ງ ສປປ ລາວ ແຂ່ງມາ 4 ນັດຊະນະທັງ 4 ນັດ ແລະ ຮອບຕໍ່ໄປຄາດວ່າຈະໄດ້ພົບກັບຄະນະກິລາບານເຕະຊາວໜຸ່ມກະຊວງສຶກສາທິການ ແລະ ກິລາໃນວັນທີ 15 ທັນວາ 2020.

ເພື່ອເປັນການໃຫ້ກຳລັງໃຈແກ່ນັກກິລາບານເຕະຂອງຊາວໜຸ່ມທັງ 2 ພາກສ່ວນຈຶ່ງຂໍເຊີນຊວນບັນດາທ່ານເຂົ້າຮ່ວມຊົມ-ຮ່ວມເຊຍທີ່ສະໜາມກິລາລ້ານຊ້າງ (ໜອງໄຮ) ໃນວັນດັ່ງກ່າວດ້ວຍ.

**#ຂ່າວ ແລະ ພາບໂດຍ: ນາງ ປາໄນພົນທະລາ**

**ຮັກບ້ານເກີດເມືອງນອນໃຊ້ຈ່າຍທອນເປັນເງິນກີບ**